**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------------------------

**ສຳນັກງານນາຍົກລັດຖະມົນຕີ** ເລກທີ 59 /ນຍ

*ນະຄອນຫຼວງວຽງຈັນ, ວັນທີ* 10.03.2005

# ດຳລັດ

## ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ສະຫະສະມາຄົມ ວິທະຍາສາດ ແລະ ວິສະວະກຳສາດ ແຫ່ງຊາດລາວ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສ.ປ.ປ. ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ການຕົກລົງ ຂອງກອງປະຊຸມ ລັດຖະບານ ຄັ້ງວັນທີ 28 ມັງກອນ 2005.
- ອີງຕາມການສະເໜີສະບັບເລກທີ 040 / 05 / ສວຊ , ລົງວັນທີ 7 ກຸມພາ 2004 ຂອງທ່ານ ລັດຖະມົນຕີ ປະຈຳສຳນັກງານນາຍົກລັດຖະມົນຕີ ປະທານສະພາວິທະສາດ ແຫ່ງຊາດ .

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ສະຫະສະມາຄົມ ວິທະຍາສາດ ແລະ ວິສະວະກຳສາດ ແຫ່ງຊາດລາວ ສະບັບນີ້ວາງອອກ ເພື່ອແນໃສ່ເພື່ອເຕົ້າໂຮມເອົາບັນດາສະມາຄົມ, ນັກປັນຍາຊົນ, ນັກຄົ້ນຄວ້າວິທະຍາສາດ ແລະ ນັກວິ ສະວະກຳ ທີ່ເປັນຄົນລາວຢູ່ພາຍໃນ ແລະ ຕ່າງປະເທດ ເຂົ້າຢູ່ໃນການ ຈັດຕັ້ງດຽວກັນ, ຜູກແໜ້ນຄວາມສາມັກຄີເຊິ່ງກັນແລະກັນ ແລະ ເສີມຂະຫຍາຍຄວາມອາດສາມາດບົ່ມຊ້ອນທາງດ້ານສະຕິປັນຍາ ແລະ ມັນສະໝອງຂອງຕົນ ປະກອບສ່ວນເຂົ້າໃນການສ້າງສາ ແລະ ພັດທະ ນາປະເທດຊາດ ໃຫ້ນັບມື້ຈະເລີນຮຸ່ງເຮືອງ.

**ມາດຕາ 2. ສະຫະສະມາຄົມ ວິທະຍາສາດ ແລະ ວິສະວະກຳສາດ**

***ສະຫະສະມາຄົມວິທະຍາສາດ ແລະ ວິສະວະກຳສາດ ແຫ່ງຊາດ***. ແມ່ນ ການຈັດ ຕັ້ງສັງຄົມ ຕາມຂະແໜງການ ແລະ ທ້ອງຖິ່ນ ຊຶ່ງປະກອບດ້ວຍບັນດາສະມາຊິກ ທີ່ ເປັນບຸກຄົນ ຫຼື ສະມາຄົມຕ່າງໆ, ໄດ້ຮັບການ ສ້າງຕັ້ງ ຂຶ້ນຢ່າງຖືກຕ້ອງ ຕາມລະບຽບກົດໝາຍ ຂອງ ສາທາ

ລະບະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ເຄື່ອນໄຫວຢູ່ໃນຂົງເຂດວຽກງານວິ ທະຍາສາດ ແລະ ວິສະວະກຳສາດ.

ສະຫະສະມາຄົມ ວິທະຍາສາດ ແລະວິສະວະກຳສາດ ແຫ່ງຊາດ ຂຽນຫຍໍ້ວ່າ: **" ສວວຊ "** ຫຼືເປັນພາສາອັງກິດ: Lao Union of Science and Engineering Associations, ຂຽນຫຍໍ້ວ່າ: **" LUSEA "**

## ໝວດທີ II

## ທີ່ຕັ້ງ, ພາລະບົດບາດ ແລະ ໜ້າທີ່ ຂອງ ສະຫະສະມາຄົມ ວິທະຍາສາດ ແລະ ວິສະວະກຳສາດ ແຫ່ງຊາດລາວ

### ມາດຕາ 3. ທີ່ຕັ້ງ ແລະ ພາລະບົດບາດ

ສວວຊ ແມ່ນການຈັດຕັ້ງສັງຄົມໜຶ່ງຊຶ່ງ ຢູ່ພາຍໃຕ້ການຄຸ້ມຄອງ ຂອງ ສະພາວິທະຍາສາດ ແຫ່ງຊາດ ມີພາລະບົດບາດເຕົ້າໂຮມ ແລະ ຜູກແໜ້ນຄວາມສາມັກຄີ ລະຫວ່າງ ສະມາຊິກ; ອຳນວຍຄວາມສະດວກ, ຊຸກຍູ້ ແລະ ສົ່ງເສີມສະມາຊິກໃນການຄົ້ນຄວ້າ, ນຳໃຊ້ເຕັກນິກວິທະຍາສາດ; ໃຫ້ຄຳປຶກສາ ຫຼື ຄຳເຫັນແກ່ລັດຖະບານ ດ້ານວຽກງານວິທະຍາສາດ ແລະ ວິສະວະກຳສາດ.

### ມາດຕາ 4. ສິດ ແລະ ໜ້າທີ່

ສວວຊ ມີສິດ ແລະ ໜ້າທີ່ ດັ່ງຕໍ່ໄປນີ້:

4.1 ຈັດຕັ້ງ, ເຜີຍແຜ່ແນວທາງນະໂຍບາຍ, ລະບຽບກົດໝາຍຂອງລັດ ກ່ຽວກັບການຄຸ້ມຄອງວຽກ ງານວິທະຍາສາດ ແລະ ວິສະວະກຳສາດ ໃຫ້ແກ່ສະມາຊິກ ສວວຊ ແລະ ປະຊາຊົນທົ່ວໄປໄດ້ຮັບ ຮູ້, ເຂົ້າໃຈ ແລະ ປະຕິບັດຕາມ;

4.2 ເຕົ້າໂຮມ ແລະ ຜູກແໜ້ນຄວາມສາມັກຄີ; ເປັນໃຈກາງປະສານງານການເຄື່ອນໄຫວ ລະຫວ່າງ ບັນດາສະມາຊິກ; ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ສະມາຊິກ ຂອງ ສວວຊ ລວມທັງນັກຮຽນຮູ້ປັນຍາຊົນທີ່ເປັນຄົນລາວຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອເສີມຂະຫຍາຍ ທ່າແຮງບົ່ມຊ້ອນ ທາງດ້ານຄວາມຮູ້ ແລະ ສະຕິປັນຍາຂອງຕົນ ເຂົ້າໃນການສ້າງສາແລະ ພັດທະ ນາປະເທດ;

4.3 ໃຫ້ການສະໜັບສະໜູນ ແລະ ສົ່ງເສີມຂະບວນການຂອງມະຫາຊົນ ເຂົ້າໃນການຄົ້ນຄວ້າ ແລະ ນຳໃຊ້ເຕັກນິກວິທະຍາສາດ, ຍົກສູງຄວາມຮູ້ ແລະ ພອນສະຫວັນໃຫ້ແກ່ປະຊາຊົນ ກ່ຽວກັບວຽກ ງານວິທະຍາສາດ ແລະ ວິສະວະກຳສາດ, ປະກອບສ່ວນຊຸກຍູ້ເຮັດໃຫ້ນະໂຍບາຍຂອງລັດຖະ ບານ ໃນການຜະລິດເປັນສິນຄ້າ ແບບ ອຸດສາຫະກຳ ແລະ ທັນສະໄໝ ເພື່ອແກ້ໄຂ ຊີວິດການ ເປັນຢູ່ ແລະ ຫຼຸດຜ່ອນຄວາມທຸກຍາກ ຂອງປະຊາຊົນ ໃຫ້ປາກົດຜົນເປັນຈິງ;

4.4 ປະກອບຄຳຄິດເຫັນຊ່ວຍລັດຖະບານ ດ້ານວຽກງານວິທະຍາສາດ, ວິສະວະກຳສາດ ແລະ ເຕັກໂນໂລຊີ ໃນຖານະເປັນອົງການຈັດຕັ້ງຂອງສັງຄົມ ເພື່ອເປັນພື້ນຖານໃຫ້ແກ່ລັດຖະ ບານໃນການຄົ້ນຄວ້າກຳນົດນະໂຍບາຍ ແລະ ລະບຽບກົດໝາຍ ກ່ຽວກັບການລົງທຶນ, ການພັດ ທະນາ

ເສດຖະກິດ-ສັງຄົມ,ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການປົກປັກຮັກສາສິ່ງແວດລ້ອມ ແລະ ການຫັນເປັນອຸດສາຫະກຳ;

4.5 ປົກປ້ອງ ສິດຜົນປະໂຫຍດອັນຊອບທຳ ແລະ ຖືກຕ້ອງຕາມກົດໝາຍ ຂອງບັນດາສະມາຊິກ, ສ້າງເງື່ອນໄຂສະດວກໃຫ້ແກ່ສະມາຊິກ ເພື່ອຍົກສູງລະດັບຄວາມຮູ້ຄວາມສາມາດ ທາງດ້ານວິທະຍາສາດ, ປັບປຸງຊີວິດການ ເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈ ຕາມເງື່ອນໄຂ ຕົວຈິງຂອງ ສະຫະສະມາຄົມ; ສຶກສາອົບຮົມ ໃຫ້ແກ່ສະມາຊິກ ກ່ຽວກັບນ້ຳໃຈຮັກຊາດຮັກລະບອບໃໝ່, ສະຕິຄວາມຮັບຜິດຊອບຂອງພົນລະ ເມືອງ ແລະ ນ້ຳໃຈບໍລິສຸດຜຸດຜ່ອງຕໍ່ວິຊາຊີບຂອງປັນຍາຊົນລາວ;

4.6 ເອົາໃຈໃສ່ປັບປຸງ, ກໍ່ສ້າງລະບົບ ການຈັດຕັ້ງ ແລະ ຂະຫຍາຍສະມາຊິກ ຂອງສະຫະສະມາຄົມ ໃຫ້ນັບມື້ເຕີບໃຫຍ່ເຂັ້ມແຂງ;

4.7 ເປັນຂົວຕໍ່ ໃນການພົວພັນປະສານງານ ລະຫວ່າງບັນດາສະມາຊິກສະຫະສະມາຄົມ ແລະ ລະຫວ່າງສະຫະສະມາຄົມ ກັບບັນດາອົງການຈັດຕັ້ງ ຂອງ ພັກ, ລັດ ແລະ ອົງການຈັດ ຕັ້ງສາກົນ ກ່ຽວກັບບັນຫາທີ່ສຳຄັນຕ່າງໆ; ໃຫ້ຄຳແນະນຳແກ່ສະມາຊິກສະຫະສະມາຄົມກ່ຽວກັບ ການພົວພັນ ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ;

4.8 ສະໝັກເຂົ້າເປັນສະມາຊິກ ຂອງ ອົງການຈັດຕັ້ງມະຫາຊົນ ຫຼື ອົງການຈັດຕັ້ງສັງຄົມຕ່າງໆ ຢູ່ ພາຍໃນ ແລະ ຕ່າງປະເທດ ຕາມການອະນຸມັດ ຂອງລັດຖະບານ;

4.9 ປະຕິບັດໜ້າທີ່ອື່ນໆ ຕາມລະບຽບກົດໝາຍ.

## ໝວດທີ III

## ການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກຂອງ ສະຫະສະມາຄົມວິທະຍາສາດ ແລະ ວິສະວະກຳສາດ ແຫ່ງຊາດລາວ

**ມາດຕາ 5. ການຈັດຕັ້ງຂອງ ສະຫະສະມາຄົມວິທະຍາສາດ ແລະ ວິສະວະກຳສາດ ແຫ່ງຊາດລາວ**

ການຈັດຕັ້ງຂອງສະຫະສະມາຄົມ ວິທະຍາສາດ ແລະ ວິສະວະກຳສາດ ແຫ່ງຊາດລາວ ປະກອບດ້ວຍ:

- ***ກອງປະຊຸມໃຫຍ່ສະມາຊິກທົ່ວປະເທດ*** ຈັດຂຶ້ນ ທຸກ ໆ 05 ປີ ເພື່ອສະຫລູບຜົນງານ, ວາງແຜນນະໂຍບາຍ ຂອງ 5 ປີ ຕໍ່ໄປ, ເລືອກຕັ້ງສະພາບໍລິ ຫານຊຸດໃໝ່, ດັດແກ້ ກົດ ລະບຽບພາຍໃນ ຫາກມີຄວາມຈຳເປັນ, ວາງທິດທາງການເຄື່ອນໄຫວວຽກງານ ລະອຽດ ຂອງສະຫະສະມາຄົມ ເພື່ອນຳສະເໜີໃຫ້ສະພາວິທະຍາສາດແຫ່ງຊາດຮັບຮອງເອົາ;
- ***ສະພາບໍລິຫານສະຫະສະມາຄົມຂັ້ນສູນກາງ*** ປະກອບດ້ວຍກຳມະການຈຳນວນໜຶ່ງທີ່ມາຈາກການເລືອກຕັ້ງ ຫຼື ຄະນະປະທານສະພາບໍຫານ ຊຸດກ່ອນ ເປັນຜູ້ສະເໜີເຂົ້າມາ; ພ້ອມດ້ວຍຜູ້ຕາງໜ້າ ຈາກສະມາຄົມຕ່າງ ໆ ທີ່ເປັນສະມາຊິກ ;
- ***ຄະນະບໍລິຫານງານ:*** ປະກອບດ້ວຍ ປະທານ, ຮອງປະທານຈຳນວນໜຶ່ງ, ເລຂາທິການ ແລະ ບັນດາກຳມະການຕ່າງໆ ທີ່ສະພາບໍລິຫານເປັນຜູ້ປ່ອນບັດເລືອກຕັ້ງ. (ຄະນະປະທານ ເປັນ ອົງການປະຈຳການ ຂອງ ສະຫະສະມາຄົມ ລະຫວ່າງ ສອງ ສະ ໄໝ ຂອງກອງປະຊຸມສະພາ ບໍລິຫານ. ຄະນະປະທານສະພາບໍລິຫານເປັນຜູ້ຊີ້ນຳໂດຍກົງ ທຸກການເຄື່ອນໄຫວຂອງ ສວວຊ ລະຫວ່າງສອງສະໄໝ ຂອງກອງປະຊຸມ).

- ***ກົງຈັກຊ່ວຍວຽກ ສວວຊ:*** ມີຫ້ອງການເລຂາທິການສະຫະສະມາຄົມ, ໃນຫ້ອງການປະ ກອບມີບັນດາໜ່ວຍງານຕ່າງ ໆ ຕາມຄວາມເໝາະສົມ, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ, ເລຂາທິການ ມີລະບຽບການສະເພາະ ຕາມການຕົກລົງ ຂອງຄະນະປະທານສະພາບໍລິຫານ.

ມາດຕະຖານບຸກຄະລາກອນ, ຮູບການຮັບສະໝັກເຂົ້າເປັນສະມາຊິກ, ການປ່ອນບັດເລືອກຕັ້ງ ລວມທັງພາລະບົດບາດ, ໜ້າທີ່ແລະຂອບເຂດສິດ ຂອງບັນດາການຈັດຕັ້ງຕ່າງໆເຫຼົ່ານີ້ ໃຫ້ກຳນົດລະອຽດຢູ່ໃນກົດລະບຽບພາຍໃນຂອງ ສວວຊ.

ສະມາຊິກ ສວວຊ ມີ ສອງ ປະເພດຄື : ສະມາຊິກ ທີ່ເປັນການ ຈັດຕັ້ງ ສະມາຄົມ ແລະ ສະມາຊິກທີ່ເປັນບຸກຄົນນັກວິທະຍາສາດ, ນັກຮຽນຮູ້ປັນຍາຊົນເຄື່ອນໄຫວໃນ ຂົງ ເຂດວຽກງານ ວິທະຍາສາດ ແລະ ວິສະວະກຳສາດ.

### ມາດຕາ 6. ແບບແຜນວິທີການເຄື່ອນໄຫວ

- ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສະຫະສະມາຄົມ ວິທະຍາສາດ ແລະ ວິສະວະ ກຳສາດແຫ່ງຊາດລາວ ແມ່ນຮັບປະກັນຫຼັກການ ເສີມຂະຫຍາຍຄວາມສາມັກຄີ ແລະ ລວມສູນປະຊາທິປະໄຕ;
- ສະພາບໍລິຫານແລະຄະນະປະທານ ເຄື່ອນໄຫວບົນພື້ນຖານການປຶກສາຫາລື ແລະ ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ;
- ບັນດາສະມາຊິກຂອງ ສວວຊ ມີສິດເປັນເຈົ້າຕົນເອງ, ທຸກສະມາຄົມລ້ວນ ແຕ່ມີກົດລະ ບຽບສະເພາະຂອງຕົນ ບົນພື້ນຖານການເຄົາລົບ ແລະ ປະຕິບັດຕາມລະບຽບກົດໝາຍ ແລະລະບຽບພາຍໃນຂອງ ສວວຊ ແລະ ຢູ່ພາຍໃຕ້ການຊີ້ນຳ, ກວດກາຂອງສະພາ ບໍລິຫານສະຫະສະ ມາຄົມຂັ້ນສູນ ກາງ;
- ສວວຊ ເຄົາລົບ ແລະ ປະຕິບັດຕາມກົດລະບຽບພາຍໃນຂອງຕົນ ແລະ ລະບຽບກົດໝາຍຂອງລັດຢ່າງເຂັ້ມງວດ.

## ໝວດທີ IV
## ບົດບັນຍັດສຸດທ້າຍ

### ມາດຕາ 7. ງົບປະມານ, ຕາປະທັບ ແລະ ເຄື່ອງໝາຍ

ສະຫະສະມາຄົມ ວິທະຍາສາດ ແລະ ວິສະວະກຳສາດ ແຫ່ງຊາດລາວ ມີງົບປະ ມານເປັນ ຂອງຕົນເອງ ຊຶ່ງໄດ້ມາຈາກການປະກອບສ່ວນຂອງສະມາຊິກ, ລັດຊ່ວຍໜູນ, ການບໍ ຫານງານດ້ານວິຊາການ ; ການຈັດ ຕັ້ງ ຫຼື ບຸກຄົນ ຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ການຊ່ວຍເຫຼືອເປັນເງິນ ຫຼືວັດຖຸ ແລະ ໄດ້ ຈາກ ແຫຼ່ງ ອື່ນໆ ທີ່ບໍ່ ຂັດກັບລະບຽບກົດໝາຍ ຊຶ່ງລາຍລະອຽດໄດ້ກຳນົດຢູ່ໃນກົດລະບຽບ ຂອງ ສວວຊ.

ສະຫະສະມາຄົມ ວິທະຍາສາດ ແລະ ວິສະວະກຳສາດ ແຫ່ງຊາດລາວ ມີຕາປະ ທັບຂອງຕົນ ເພື່ອນຳໃຊ້ໃນວຽກງານບໍລິຫານ ແລະ ມີເຄື່ອງໝາຍສະເພາະ.

**ມາດຕາ 8. ການຈັດຕັ້ງປະຕິບັດ**

8.1 ສະພາວິທະຍາສາດແຫ່ງຊາດ ເປັນຜູ້ຈັດຕັ້ງຄຸ້ມຄອງ ຕິດຕາມ, ກວດກາ, ແນະນໍາ ແລະ ຊຸກຍູ້ ການເຄື່ອນໄຫວຂອງສະຫະສະມາຄົມ ວິທະຍາສາດ ແລະ ວິສະວະກໍາສາດ ແຫ່ງ ຊາດລາວ ໂດຍຮ່າງກົດລະບຽບພາຍໃນຂອງຕົນ ເພື່ອສະເໜີຜ່ານກອງປະຊຸມໃຫຍ່ທົ່ວປະເທດ ຂອງສະຫະ ສະມາຄົມ ແລ້ວ ສະເໜີໃຫ້ນາຍົກຕົກລົງຮັບຮອງ ແລະ ປະກາດໃຊ້ກົດລະບຽບດັ່ງກ່າວ;

8.2 ການຈະປັບປຸງ ຫຼື ດັດແປງກົດລະບຽບພາຍໃນຂອງ ສວວຊ ມີແຕ່ກອງປະຊຸມໃຫ່ຍ ສະມາຊິກ ທົ່ວປະເທດຂອງ ສະຫະສະມາຄົມ ຕົກລົງກັນ ຕາມສຽງສ່ວນຫຼາຍ.

8.3 ສໍານັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງ ທ້ອງຖິ່ນ, ສະພາວິທະຍາສາດແຫ່ງຊາດ, ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ຈົ່ງ ຮັບຮູ້ ແລະ ປະຕິບັດຕາມດໍາລັດສະບັບນີ້ ຕາມໜ້າທີ່ຂອງໃຜລາວ.

**ມາດຕາ 9. ຜົນສັກສິດ**

ດໍາລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ.ລາວ